**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະກອນອອມຊັບ-ສິນເຊື່ອ ອທອ

ເລກທີ 039 /ສອສ.ອທອ

ນະຄອນຫຼວງວຽງຈັນ, ວັນທີ 7 / 5 / 15

# ແຈ້ງການ

ເຖິງ: ບັນດາສະມາຊິກສະຫະກອນອອມຊັບ-ສິນເຊື່ອ ອທອ.

ເລື່ອງ: ການກູ້ຢືມເງິນ ແບບພິເສດ.

- ອີງຕາມ ການສະເໜີ ຂອງສະມາຊິກ ສະຫະກອນ ອອມຊັບ-ສິນເຊື່ອ ອທອ.
- ອີງຕາມ ການຄົ້ນຄວ້າເພື່ອສ້າງເງື່ອນໄຂການໃຫ້ກູ້ຢືມ ໃຫ້ສອດຄ່ອງກັບສະພາບການເງິນ ຂອງ ສອສ ໃນປະຈຸບັນ ແລະ ທັງເປັນການສ້າງເງື່ອນໄຂໃຫ້ສະມາຊິກມີຄວາມອາດສາມາດເຂົ້າເຖິງແຫຼ່ງທຶນ ເປັນສ້າງເສດຖະກິດຄອບຄົວ ຫຼື ທຸລະກິດຂະນາດນ້ອຍ-ກາງ.
- ອີງຕາມ ການຄົ້ນຄ້ວາເຫັນດີເປັນເອກະພາບໃນກອງປະຊຸມຄະນະບໍລິຫານງານ ສະຫະກອນ ອອມຊັບ-ສິນເຊື່ອ ອທອ ຄັ້ງວັນທີ 28 ເມສາ 2015.

ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາສະມາຊິກ ສອສ ຊາບວ່າ ສະຫະກອນອອມຊັບ-ສິນເຊື່ອ ອທອ ຈະໄດ້ປັບປຸງເງື່ອນໄຂການກູ້ຢືມແບບພິເສດ ເພື່ອອຳນວຍຄວາມສະດວກໃຫ້ສະມາຊິກສາມາດເຂົ້າຫາແຫຼ່ງທຶນໄດ້ຫຼາຍຂຶ້ນ, ໃຫ້ສະມາຊິກມີເງິນທຶນ ແລະ ສາມາດນຳໃຊ້ເຂົ້າໃນການສ້າງເສດຖະກິດຄອບຄົວ ຫຼື ການດຳເນີນທຸລະກິດຂະນາດນ້ອຍ-ກາງ ພາຍໃຕ້ເງື່ອນໄຂການກູ້ຢືມດັ່ງນີ້:

1.) <u>ການກູ້ຢືມເງິນ ແບບພິເສດ ສຳຫລັບສົ່ງເສີມການສ້າງເສດຖະກິດຄອບຄົວ :</u>

- ວົງເງິນ ສູງສຸດ 300 ລ້ານກີບ.
- ໄລຍະເວລາ ກູ້ຢືມສູງສຸດ 36 ເດືອນ.
- ເງື່ອນໄຂການຊຳລະ: ຊຳລະ ເງິນຕົ້ນ ແລະ ດອກເບ້ຍ ປົກກະຕິທຸກເດືອນ.
- ອັດຕາດອກເບ້ຍ: ກູ້ຢືມ 12 ເດືອນ: 1.7% ຕໍ່ເດືອນ; ກູ້ຢືມ 24 ເດືອນ: 1.8% ຕໍ່ເດືອນ; ກູ້ຢືມ 36 ເດືອນ: 2% ຕໍ່ເດືອນ.
- ຫຼັກຊັບຄ້ຳປະກັນ : ໃຊ້ທີ່ດິນເປັນຫຼັກຊັບຄ້ຳປະກັນ ໂດຍວົງເງິນກູ້ບໍ່ເກີນ 70% ຂອງມູນຄ່າຫລັກຊັບຄ້ຳປະກັນ.

2.) <u>ການກູ້ຢືມເງິນ ແບບພິເສດ ເພື່ອດຳເນີນທຸລະກິດ :</u>

- ວົງເງິນ ສູງສຸດ 300 ລ້ານກີບ.
- ໄລຍະເວລາ ກູ້ຢືມ 36 ເດືອນເທົ່ານັ້ນ.
- ມີບົດສະເໜີໂຄງການ (ບົດວິພາກເສດຖະກິດ ຂອງການກູ້ຢືມເງິນ) ເພື່ອຄົ້ນຄວ້າອານຸມັດກູ້ຢືມ ຕາມ ແບບຟອມ ຂອງ ສອສ.

- ສະມາຊິກ ທີ່ກູ້ຢືມ ສາມາດຂໍພັກຊຳລະເງິນຕົ້ນເປັນເວລາ 12 ເດືອນ.
- ເງື່ອນໄຂການຊຳລະ: ຊຳລະດອກເບ້ຍປົກກະຕິທຸກເດືອນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຊຳລະເງິນຕົ້ນ ເປັນປົກກະຕິ ທຸກເດືອນ ພາຍຫຼັງສິ້ນສຸດໄລຍະພັກຊຳລະເງິນຕົ້ນ 12 ເດືອນ ຕາມສັນຍາ.
- ອັດຕາດອກເບ້ຍ: 2% ຕໍ່ເດືອນ.
- ຫຼັກຊັບຄ້ຳປະກັນ : ໃຊ້ທີ່ດິນເປັນຫຼັກຊັບຄ້ຳປະກັນ ໂດຍວົງເງິນກູ້ບໍ່ເກີນ 70% ຂອງມູນຄ່າຫລັກຊັບ.

**3.)** ສຳລັບການກູ້ຢືມແບບຕັດເງິນເດືອນ ແມ່ນສືບຕໍ່ ປະຕິບັດຕາມ ແຈ້ງການເລກທີ່ 093/ສອສ.ອທອ, ລົງວັນທີ່ 26/9/2014 ຈົນກວ່າຈະມີການປັບປຸງ.

ສະນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານສະມາຊິກ ສອສ ເພື່ອຊາບ.

ຫົວໜ້າອຳນວຍການ ສອສ

ບົາມາລາ ຊຽວວິາພະຈັນ

**<u>ສອບຖາມຂໍ້ມູນ</u>:**

- ທ່ານ ນ. ລຳພອນ ແກ້ວແກ່ນຈັນ ໂທ: 020 22210057
- ທ່ານ ນ. ມະໄລທິບ ໄທລາວັນ ໂທ: 020 22210078
- ທ່ານ ໄຊສົມໝາຍ ສໍສຳພັນໄຊ ໂທ: 020 22210307 (ສຳຫລັບກູ້ຢືມເງິນແບບພິເສດ ເພື່ອດຳເນີນທຸລະກິດ)